**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງສະຫະພັນກຳມະບານລາວ
ຫ້ອງການ

ເລກທີ 1112 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 12 ກັນຍາ 2025

# ໜັງສືແຈ້ງເລື່ອນການປະມູນ

- ອີງຕາມ ກົດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 1218/ສກລ, ລົງວັນທີ 27 ກັນຍາ 2022;
- ອີງຕາມ ໜັງສືແຈ້ງເຊີນການປະມູນ ສະບັບເລກທີ 973/ຫກ, ລົງວັນທີ 15 ສິງຫາ 2025.

1. ຫ້ອງການ ສູນກາງສະຫະພັນກຳຫະບານລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຍື່ນຊອງປະມູນ ສຳລັບການຈັດຊື້ກ້ອງຖ່າຍຮູບໃຫ້ສະຫະພັນກຳມະບານແຂວງທົ່ວປະເທດ;
2. ການປະມູນດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກແຜນການ ແລະ ການເງິນ, ຫ້ອງການ ສູນກາງສະຫະພັນກຳມະບານລາວ, ໂທລະສັບ 020 54939994, 020 98797826 ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ພະແນກແຜນການ ແລະ ການເງິນ, ໃນເວລາໂມງລັດຖະການ.
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນຫນັງສືສະເໜີຫາ ຫ້ອງການ, ສູນກາງສະຫະພັນກຳມະບານລາວ, ເລີ່ມແຕ່ວັນທີ 15 ສິງຫາ 2025 ເປັນຕົ້ນໄປ, ໃນລາຄາຈຳນວນ 3,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້,ໃນເວລາ ຫລື ກ່ອນ ຊຶ່ງໄດ້ແຈ້ງເຊີນປະມູນອອກໄປ ໃນເວລາ 14 ໂມງ 00 ນາທີ, ວັນທີ 15 ກັນຍາ 2025 ເລື່ອນມາເປັນ 14 ໂມງ 00 ນາທີ, ວັນທີ 23 ກັນຍາ 2025 ຫ້ອງປະຊຸມນ້ອຍ ຊັ້ນ 04 ຕຶກສູນຝຶກອົບຮົມວິຊາຊີບກຳມະບານລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 14 ໂມງ 00 ນາທີ, ວັນທີ 23 ກັນຍາ 2025 ທີ່ຫ້ອງປະຊຸມນ້ອຍ ຊັ້ນ 04 ຕຶກສຳສູນຝຶກອົບຮົມວິຊາຊີບກຳມະບານລາວ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ໄດ້ກຳນົດ;
6. ທຸກໆຊອງປະມູນຕ້ອງໄດ້ມີການຄ້ຳປະກັນການປະມູນດ້ວຍເງິນສົດ, ແຊັກ (ວີຊາ), ໜັງສືຄ້ຳປະກັນອອກໂດຍທະນາຄານ, ບໍ່ໃຫ້ຫຼຸດ 2% ຂອງມູນຄ່າສະເໜີ.

**ຫົວໜ້າຫ້ອງການ**

ບຸນຈັນ ໃຈອີສານ